ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----000-----

ສຳນັກງານນາຍົກລັດຖະມົນຕີ ເລກທີ 03 /ນຍ

ວຽງຈັນ, ວັນທີ: 28-01-2002

# ດຳລັດ

# ວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວ

# ຂອງຄະນະກຳມະການຂົນສົ່ງແຫ່ງຊາດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສະບັບເລກທີ01/95 ລົງວັນທີ 8/03/95.
- ອີງຕາມກົດໝາຍວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 03-97/ສພຊ ລົງວັນທີ 12/4/97.
- ອີງຕາມການສະເໜີຂອງກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ສະບັບເລກທີ 074/ຄຂປກ, ລົງວັນທີ 9/01/2002.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ກຳນົດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງຄະນະກຳມະການຂົນສົ່ງແຫ່ງຊາດເພື່ອເຮັດໃຫ້ການຄຸ້ມຄອງການ ຂົນສົ່ງທັງພາຍໃນປະເທດ, ລະຫວ່າງປະເທດ ແລະ ຜ່ານແດນ ໃຫ້ມີຄວາມສະດວກວ່ອງໄວ, ປອດໄພ ແລະ ສາມາດເຊື່ອມໂຍງລະບົບການຂົນສົ່ງຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກັບລະບົບການຂົນສົ່ງຂອງອາຊຽນ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ ແນໃສ່ເຮັດໃຫ້ການພັດທະນາ ແລະ ການສົ່ງເສີມ ການຂົນສົ່ງທຸກປະເພດໃຫ້ມີຄວາມກ້າວໜ້າຂະຫຍາຍຕົວ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດຂອງຄະນະກຳມະການຂົນສົ່ງແຫ່ງຊາດ**

ກະຊວງຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ, ມີພາລະບົດບາດໃນການສຶກສາຄົ້ນຄວ້າ, ປະກອບຄໍາເຫັນກ່ຽວກັບວຽກງານການຂົນສົ່ງທຸກປະເພດ ແລະ ມີໜ້າທີ່ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດໃນການຈັດຕັ້ງປະຕິບັດວຽກງານການຂົນສົ່ງ ຕາມທີ່ລັດຖະບານກໍຄືກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ໄດ້ຕົກລົງອະນຸມັດ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດຂອງຄະນະກໍາມະການຂົນສົ່ງແຫ່ງຊາດ

### ມາດຕາ 3. ໜ້າທີ່ຂອງຄະນະກໍາມະການຂົນສົ່ງແຫ່ງຊາດ

ນອກຈາກໜ້າທີ່ທີ່ກໍານົດໄວ້ຢູ່ໃນມາດຕາ 39 ຂອງກົດໝາຍຂົນສົ່ງທາງບົກ, ຄະນະກໍາມະການ ຂົນສົ່ງແຫ່ງຊາດຍັງມີໜ້າທີ່ລະອຽດດັ່ງຕໍ່ໄປນີ:

1. ສຶກສາຄົ້ນຄ້ວາ ແລະ ປະກອບຄໍາເຫັນບັນດາຂໍ້ກໍານົດ, ກົດລະບຽບ, ກົດໝາຍ, ຂໍ້ຕົກລົງອາຊຽນ ຂໍ້ຕົກລົງສອງ ແລະ ຫຼາຍຝ່າຍ ດ້ານການຂົນສົ່ງໃຫ້ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເພື່ອນໍາສະເໜີ ລັດຖະບານ ພິຈາລະນາຮັບຮອງເອົາ;
2. ຈັດຕັ້ງເຜີຍແຜ່ຂໍ້ຕົກລົງອາຊຽນຂໍ້ຕົກລົງສອງ ແລະ ຫຼາຍຝ່າຍ ແລະ ບັນດາສົນທິສັນຍາສາກົນຕ່າງໆ ທີ່ກ່ຽວພັນກັບວຽກງານການຂົນສົ່ງ;
3. ແປ, ລຽບລຽງ ແລະ ຈັດພິມ ບັນດາ ຂໍ້ຕົກລົງແລະ ສົນທິສັນຍາສາກົນຕ່າງໆ ດ້ານການຂົນສົ່ງ;
4. ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດບັນດາຂໍ້ກໍານົດກົດລະບຽບ, ກົດໝາຍ, ຂໍ້ຕົກລົງ ແລະ ສົນທິສັນຍາສາກົນຕ່າງໆດ້ານການຂົນສົ່ງ;
5. ຊຸກຍູ້ ແລະ ສົ່ງເສີມກໍາລັງການຜະລິດດ້ານການຂົນສົ່ງໃຫ້ມີການຂະຫຍາຍຕົວ, ມີລະດັບເຕັກນິກວິດທະຍາສາດອັນກ້າວໜ້າທັນສະໄໝ ຕາມກົນໄກເສດຖະກິດຕະຫລາດທີ່ມີການຄຸ້ມຄອງຂອງລັດ ແລະ ມີການແຂ່ງຂັນທີ່ຖືກຕ້ອງຕາມກົດໝາຍແນໃສ່ເຮັດໃຫ້ການຂົນສົ່ງມີປະສິດທິຜົນສູງ, ມີຄວາມສະດວກວ່ອງໄວ, ປອດໄພສູງ ແລະ ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມ;
6. ຊຸກຍູ້ ແລະ ສົ່ງເສີມການນໍາໃຊ້ລະບົບສື່ສານທາງໄກດ້ານການຂົນສົ່ງ ແລະ ລະບົບຂໍ້ມູນຂ່າວສານທີ່ ທັນສະໄໝ ພາຍໃນປະເທດ, ຂົງເຂດອາຊຽນ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ;

7. ຄົ້ນຄ້ວາການນຳໃຊ້ເອກະສານທີ່ກ່ຽວຂ້ອງກັບການຂົນສົ່ງຂອງສາກົນ ແນໃສ່ເຮັດໃຫ້ຂັ້ນຕອນ ການດຳເນີນການຂອງລະບົບການຂົນສົ່ງຂອງລາວໃຫ້ ເປັນເອກະພາບ ແລະ ເຊື່ອມໂຍງກັນກັບ ລະບົບການຂົນສົ່ງຂອງສາກົນ;
8. ມີໜ້າທີ່ປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ເພື່ອເຮັດໃຫ້ການ ປະຕິບັດຂໍ້ຕົກລົງດ້ານການຂົນສົ່ງກັບສາກົນໃຫ້ມີປະສິດທິຜົນສູງ;
9. ມີໜ້າທີ່ເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ຕ່າງປະເທດທີ່ກ່ຽວຂ້ອງກັບວຽກງານຂອງຕົນ ແລະ ຊ່ວຍຊອກແຫຼ່ງທຶນ ຫຼື ຊ່ວຍຊານເພື່ອພັດທະນາຂະແໜງຂົນສົ່ງ;
10. ຂື້ນແຜນງົບປະມານປະຈຳປີເພື່ອນຳໃຊ້ເຂົ້າໃນວຽກງານຂອງຕົນໃຫ້ໄດ້ຮັບຜົນດີ;

**ມາດຕາ 4. ຂອບເຂດສິດຂອງຄະນະກຳມະການຂົນສົ່ງແຫ່ງຊາດ.**

ຄະນະກຳມະການຂົນສົ່ງແຫ່ງຊາດ ມີຂອບເຂດສິດດັ່ງຕໍ່ໄປນີ້:

1. ປະສານສົມທົບ ແລະ ພົວພັນກັບທຸກພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດທີ່ກ່ຽວພັນກັບບົດບາດ ແລະ ໜ້າທີ່ຂອງຕົນ;
2. ຄົ້ນຄ້ວາ ແລະ ປະກອບຄຳເຫັນ ບັນດາຂໍ້ກຳນົດກົດລະບຽບ, ຂໍ້ຕົກລົງ, ກົດໝາຍ, ຂໍ້ຕົກລົງອາຊຽນ, ຂໍ້ຕົກລົງສອງ ແລະ ຫຼາຍຝ່າຍ ແລະ ເອກະສານຕ່າງໆດ້ານການຂົນສົ່ງທຸກປະເພດໃຫ້ກະຊວງ ຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ.
3. ເຄື່ອນໄຫວແລກປ່ຽນ ແລະ ເກັບກຳຂໍ້ມູນຂ່າວສານດ້ານການຈັດຕັ້ງປະຕິບັດ ແລະ ການບໍລິການ ການຂົນສົ່ງຢູ່ທັງພາຍໃນ ແລະ ຕ່າງປະເທດເພື່ອນຳມາຄົ້ນຄ້ວາແລະສະເໜີປັບປຸງ ໃຫ້ມີປະສິດທິຜົນສູງ;
4. ຈັດຕັ້ງເຜີຍແຜ່ ແລະ ໂຄສະນາ ຂໍ້ຕົກລົງອາຊຽນ, ຂໍ້ຕົກລົງສອງ ຫຼື ຫຼາຍຝ່າຍ, ສົນທິສັນຍາສາກົນຕ່າງໆ. ຕິດຕາມ ແລະ ຊຸກການຈັດຕັ້ງປະຕິບັດຂໍ້ຕົກລົງດັ່ງກ່າວໃຫ້ໄດ້ຮັບຜົນດີ;
5. ແຈ້ງບັນຊີຜູ້ດຳເນີນການຂົນສົ່ງ ແລະ ຍານພາຫະນະຂົນສົ່ງທີ່ດຳເນີນການຂົນສົ່ງລະຫວ່າງປະເທດທີ່ກະຊວງຄົມມະນາຄົມ, ຂົນສົ່ງ ໄປສະນີ ແລະ ກໍ່ສ້າງໄດ້ອະນຸມັດ;
6. ແຕ່ງຕັ້ງຕົວແທນຂອງຕົນເຂົ້າຮ່ວມເປັນສະມາຊິກຂອງຄະນະກຳມະການຮ່ວມສາກົນເພື່ອປະຕິບັດ ຂໍ້ຕົກລົງກ່ຽວກັບການຂົນສົ່ງ;
7. ນຳໃຊ້ພະນັກງານ, ງົບປະມານ, ພາຫະນະ ແລະ ອຸປະກອນຮັບໃຊ້ຕ່າງໆທີ່ລັດປະກອບໃຫ້; ແລະ
8. ມີສິດອື່ນໆ ຕາມການມອບໝາຍຂອງກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ;

## ໝວດທີ III

## ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບການຈັດຕັ້ງແລະບຸກຄະລາກອນຂອງ ຄະນະກຳມະການຂົນສົ່ງແຫ່ງຊາດ**

**5.1 ໂຄງປະກອບບຸກຄະລາກອນຂອງຄະນະກຳມະການຂົນສົ່ງແຫ່ງຊາດປະກອບດ້ວຍ:**

1. ລັດຖະມົນຕີ/ລັດຖະມົນຕີ ຊ່ວຍວ່າການ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນປະທານ
2. ລັດຖະມົນຕີຊ່ວຍວ່າການກະຊວງການຄ້າ ເປັນ ຮອງປະທານ
3. ຫົວໜ້າຫ້ອງການ ກະຊວງ ຄົມມະນາຄົມ ຂົນສົ່ງໄປສະນີ ແລະກໍ່ສ້າງ ເປັນຮອງ ປະທານ
4. ຫົວໜ້າກົມຂົນສົ່ງ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນ ກຳມະການທັງເປັນຫົວໜ້າກອງເລຂາ ແລະ ເປັນຜູ້ປະຈຳການ.
5. ຫົວໜ້າກົມສົນທິສັນຍາ ແລະ ກົດໝາຍກະຊວງການຕ່າງປະເທດ ເປັນກຳມະການ
6. ຫົວໜ້າກົມການຄ້າຕ່າງປະເທດ ກະຊວງການຄ້າ ເປັນກຳມະການ
7. ຫົວໜ້າກົມຕຳລວດກວດຄົນເຂົ້າເມືອງ ກະຊວງພາຍໃນ ເປັນກຳມະການ
8. ຫົວໜ້າກົມຄຸ້ມຄອງເສດຖະກິດ ຄະນະກຳມະການແຜນການແຫ່ງລັດເປັນກຳມະການ
9. ຫົວໜ້າກົມ ພາສີ, ກະຊວງການເງິນ ເປັນກຳມະການ
10. ປະທານ ສະພາຫໍການຄ້າ ແລະ ອຸດສະຫະກຳແຫ່ງຊາດ ເປັນກຳມະການ
11. ຜູ້ອຳນວຍການ ບໍລິສັດປະກັນໄພ ແຫ່ງ ສປປ ລາວ ເປັນກຳມະການ
12. ຕົວແທນສະມາຄົມຜູ້ຈັດສົ່ງ ແລະ ຂົນສົ່ງສິນຄ້າ ເປັນກຳມະການ
13. ຕົວແທນສະມາຄົມຂົນສົ່ງໂດຍສານ ເປັນກຳມະການ

**5.2 ໂຄງປະກອບກົງຈັກຂອງຄະນະກຳມະການຂົນສົ່ງແຫ່ງຊາດ**

ການຈັດຕັ້ງຂອງຄະນະກຳມະການຂົນສົ່ງແຫ່ງຊາດເປັນການຈັດຕັ້ງທີ່ບໍ່ປະຈຳການ, ແຕ່ມີຫ້ອງການປະຈຳເພື່ອຊ່ວຍວຽກເອີ້ນວ່າ: "ກອງເລຂາ" ໂດຍຖືເອົາກົມຂົນສົ່ງ ກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນ ກອງເລຂາຂອງຄະນະກຳມະການຂົນສົ່ງແຫ່ງຊາດ ຊຽນຫຍໍ້ວ່າ "ກຂຊ" ແລະ ມີພະນັກງານເພື່ອຊ່ວຍວຽກຈຳນວນນຶ່ງຕາມຄວາມເໝາະສົມ.

**5.3 ກອງເລຂາຂອງຄະນະກຳມະການຂົນສົ່ງແຫ່ງຊາດປະກອບມີ:**

ຫົວໜ້າກົມຂົນສົ່ງ ກະຊວງ ຄຂປກ ເປັນຫົວໜ້າກອງເລຂາຂອງ ຄະນະກຳມະການຂົນສົ່ງແຫ່ງ ຊາດ ໂດຍຕຳແໜ່ງ ແລະ ມີ ຮອງຫົວໜ້າກອງເລຂາຄະນະກຳມະການຂົນສົ່ງແຫ່ງຊາດຈຳນວນນຶ່ງເພື່ອຊ່ວຍວຽກ. ຮອງຫົວໜ້າກອງເລຂາຄະນະກຳມະການຂົນສົ່ງແຫ່ງຊາດໄດ້ຮັບການແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍລັດຖະມົນຕີວ່າການກະຊວງຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ.

## ໝວດທີ IV

## ແບບແຜນວິທີເຮັດວຽກຂອງຄະນະກຳມະການຂົນສົ່ງແຫ່ງຊາດ

**ມາດຕາ 6.** ຄະນະກຳມະການຂົນສົ່ງແຫ່ງຊາດເຄື່ອນໃຫວວຽກງານຕາມແບບແຜນວິທີເຮັດວຽກດັ່ງຕໍ່ໄປນີ້:

6.1 ທຸກການເຄື່ອນໄຫວຂອງຄະນະກຳມະການແມ່ນຍຶດໝັ້ນກັບແນວທາງນະໂຍບາຍຂອງພັກ ແລະ ລັດຖະບານພາຍໃຕ້ການຊີ້ນຳຂອງກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ;

6.2 ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕບົນພື້ນຖານຄວາມເປັນເອກະພາບ;

6.3 ເຮັດວຽກຢ່າງມີແຜນການ, ມີກຳນົດເວລາ ແລະ ຕໍ່ເນື່ອງ;

6.4 ປະຕິບັດລະບອບສ່ອງແສງ ແລະລາຍງານໃຫ້ຂັ້ນເທິງຕາມກຳນົດເວລາແລະເປັນປະຈຳ;

**ມາດຕາ 7.** ມອບໃຫ້ລັດຖະມົນຕີວ່າການ ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ແລະ ປະທານ ຄະນະກຳມະການຂົນສົ່ງແຫ່ງຊາດຜັນຂະຫຍາຍລະອຽດ, ກຳນົດກ່ຽວກັບແບບແຜນວິທີເຮັດວຽກ ຂອງ ຄະນະກຳມະການຂົນສົ່ງແຫ່ງຊາດ ແລະ ໜ້າທີ່ຂອງກອງເລຂາຂອງຄະນະກຳມະການຂົນສົ່ງແຫ່ງຊາດຕາມຄວາມເໝາະສົມ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 8. ກາປະທັບ**

ຄະນະກຳມະການຂົນສົ່ງແຫ່ງຊາດ ມີກາປະທັບຂອງຕົນເອງເພື່ອນຳໃຊ້ເຂົ້າໃນວຽກງານທາງລັດ ຖະການ ໂດຍນຳໃຊ້ກາປະທັບຂອງກະຊວງ ຄຂປກ. ສ່ວນກາປະທັບຂອງກອງເລຂາແມ່ນນຳໃຊ້ ກາປະທັບຂອງກົມຂົນສົ່ງ.

**ມາດຕາ 9. ການຈັດຕັ້ງປະຕິບັດ**

ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ພ້ອມດ້ວຍບັນດາກະຊວງ. ອົງການທຽບເທົ່າກະຊວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ຄວາມສະດວກ ແລະປະສານສົມທົບກັນ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 10.** ຜົນສັກສິດ

ດຳລັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດ ແລະ ລະບຽບການທີ່ຂັດກັບດຳລັດສະບັບນີ້ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ.

ບຸນຍັງ ວໍລະຈິດ